B. **ກຸ່ມທ່ານໝໍຂອງທ່ານ?** ແມ່ນກຸ່ມທ່ານໝໍທີ່ປິ່ນປົວຮັກສາທ່ານ. ບໍຣິສັດປະກັນສຸຂພາບບາງບໍຣິສັດຈ້າງກຸ່ມນາຍແພດເພື່ອບໍຣິການການຮັກສາສຸຂພາບທັງໝົດຂອງທ່ານ. ບາງເທື່ອ, ກຸ່ມນາຍແພດປະຕິເສດການຮັກສາເພື່ອປະຫຍັດເງິນ.

C. **ແຜນບໍຣິການສຸຂພາບ ຫລື HMO ຂອງທ່ານບໍ?** ແມ່ນບໍຣິສັດປະກັນສຸຂພາບ.

# ຈົ່ງຂໍຮັບການຕັດສິນເປັນລາຍລັກອັກສອນ

ການຕັດສິນເປັນລາຍລັກອັກສອນຄວນຈະກຳນົດຂໍ້ທີ່ໄດ້ຕັດສິນໃຈ. ແລະຄວນກຳນົດເຫດຜົນທີ່ໄດ້ມີຂໍ້ຕັດສິນໃຈດັ່ງກ່າວ.



# ຈົ່ງຂໍຄວາມເຫັນຈາກແພດອື່ນ

ລາງເທື່ອທ່ານໝໍຫລືພະຍາບານຄິດວ່າທ່ານບໍ່ຈຳເປັນໄດ້ຮັບການຮັກສາແນວໃດແນວໜຶ່ງ. ບາງທີໝໍອີກຜູ້ໜຶ່ງຈະມີຄວາມເຫັນທີ່ແຕກຕ່າງກັນ. ໃຫ້ທ່ານຖາມເບິ່ງວ່າທາງແຜນສຸຂພາບຂອງທ່ານຈະຍອມຈ່າຍຄ່າເພື່ອຫາຄວາມເຫັນຂອງໝໍຜູ້ທີສອງທີ່ຂຶ້ນກັບແຜນດຽວກັນ, ຫລືແມ່ນແຕ່ຈາກໝໍທີ່ບໍ່ໄດ້ຂຶ້ນກັບແຜນກໍໄດ້. ຫລືຖ້າແຜນຮັກສາສຸຂພາບຂອງທ່ານບໍ່ຍອມຈ່າຍ, ບາງທີທ່ານຄວນພິຈາລະນາວ່າຈະຈ່າຍເອງເພື່ອໄດ້ຄວາມເຫັນຈາກໝໍທີສອງກໍໄດ້.

# ໃຫ້ອະທິບາຍຄວາມຕ້ອງການຂອງທ່ານເປັນປະໂຫຍກສັ້ນໆສອງປະໂຫຍກ

ໃຫ້ບອກສິ່ງທີ່ທ່ານຕ້ອງການເປັນປະໂຫຍກສັ້ນປະໂຫຍກດຽວ. ໂຕຢ່າງ, “ຂ້າພະເຈົ້າຄິດວ່າທ່ານຄວນຮັບປະກັນຄ່າຢາທີ່ໝໍໄດ້ສັ່ງ.” ຕໍ່ໄປໃຫ້ບອກວ່າເປັນຫຍັງທ່ານຈຶ່ງຄວນໄດ້ແນວນັ້ນ, ໂດຍການໃຊ້ປະໂຫຍກສັ້ນໆອີກປະໂຫຍກໜຶ່ງ. ໃຫ້ທ່ານແອບເວົ້າສອງປະໂຫຍກນີ້ຈົນຄ່ອງ.

# ຈົ່ງໃຊ້ພະແນກບໍຣິການສະມາຊິກ(Member Services)ຂອງແຜນສຸຂພາບຂອງທ່ານ



ໜ້າທີ່ຂອງພວກເຂົາແມ່ນເພື່ອຊ່ວຍເຫລືອທ່ານໃຫ້ໄດ້ຮັບການຮັກສາສຸຂພາບທີ່ທ່ານຕ້ອງການ. ໃຫ້ທ່ານຕິດຕໍ່ພວກເຂົາລອງເບິ່ງກ່ອນ–ບາງທີຈະໄດ້ຜົນ. ຖ້າວ່າບໍ່ໄດ້ຜົນ, ໃຫ້ທ່ານເຮັດຕາມຂັ້ນຕອນທີ່ໄດ້ອະທິບາຍຢູ່ຂ້າງລຸ່ມຕໍ່ໄປ.

# ຕຽມພ້ອມທີ່ຈະຕໍ່ສູ້ຫລາຍດ້ານໃນເວລາດຽວກັນ.

ຈົ່ງພິຈາລະນາຂັ້ນຕອນ**ທັງໝົດ**ເຫລົ່ານີ້:

A. **ຍື່ນຄຳຮ້ອງທຸກໃຫ້ກັບແຜນຮັກສາສຸຂພາບ.** ແມ່ນຈົດໝາຍທີ່ອະທິບາຍເຫດຜົນວ່າທ່ານບໍ່ພໍໃຈກັບບໍຣິການທີ່ທ່ານໄດ້ຮັບ.

B. **ຍື່ນຄຳອຸທອນຕໍ່ແຜນຮັກສາສຸຂພາບ.** ແມ່ນຈົດໝາຍອີກກ້ານໜຶ່ງເພື່ອຮ້ອງຂໍໃຫ້ມີການຕັດສິນໃຈໃໝ່ເພື່ອໃຫ້ທ່ານໄດ້ຮັບການຮັກສາສຸຂພາບທີ່ທ່ານຕ້ອງການ.



C. **ຖ້າທ່ານໄດ້ຮັບ Medi-Cal ຫລື Medicare, ໃຫ້ຂໍການພິຈາລະນາ.** ຜູ້ພິພາກສາຈະຟັງເລື່ອງຈາກທັງສອງຝ່າຍ. ເພື່ອຂໍການພິຈາລະນາຈາກ Medi-Cal, ໃຫ້ໂທຫາ 1-800-952-5253. ເພື່ອຂໍການພິຈາລະນາຈາກ Medicare, ໃຫ້ໂທຕາມເລກໂທທີ່ມີຢູ່ດ້ານຫລັງຂອງຈົດໝາຍປະຕິເສດທີ່ທ່ານໄດ້ຮັບຈາກພວກເຂົາ.

D. **ໃຫ້ຍື່ນຄຳຮ້ອງທຸກຂຶ້ນຫາຣັຖບານ.** ພວກເຮົາຈະແນະນຳວ່າທ່ານຄວນຍື່ນຄຳຮ້ອງທຸກປະເພດຂອງທ່ານໃຫ້ກັບອົງການຂອງຣັຖບານອົງການໃດ.

# ໃຫ້ໂທຫາພວກເຮົາໂລດ

ທັນທີທີ່ທ່ານມີບັນຫາ. ພະນັກງານຜູ້ຊຳນານຂອງພວກເຮົາຈະພະຍາຍາມຈົນສຸດຂີດເພື່ອໃຫ້ທ່ານໄດ້ຮັບການຮັກສາພະຍາບານທີ່ທ່ານຕ້ອງການ. ພວກເຮົາຢູ່ຝ່າຍພວກທ່ານ.